ທ່ານ ນາງ ວຽງສະໄໝ ສຣິດທິຣາດ, ຮັກສາການ ຫົວໜ້າຫ້ອງການທະນາຄານໂລກ ປະຈຳ ສປປ ລາວ

**ພິທີເປີດງານ ຊຸກຍູ້ ແລະ ສົ່ງເສີມ ການທ່ອງທ່ຽວ ໃນເຂດປ່າໄມ້**
**ຄັ້ງວັນທີ 12 ກັນຍາ 2025, ທີ່ໂຮງແຮມ ເມືອງແທ່ງ, ນະຄອນຫລວງວຽງຈັນ.**

**ຮຽນພະນະ** ທ່ານ ກິແກ້ວ ສີງນາວົງ, ຮອງລັດຖະມົນຕີ ກະຊວງກະສິກາ ແລະ ສິ່ງແວດລ້ອມ
**ນັບຖື ແລະ ຮັກແພງ**

- ບັນດາທ່ານ ຫົວໜ້າ/ຮອງຫົວໜ້າ ຫ້ອງການ, ກົມ, ສະຖາບັນ, ພະແນກການທີ່ກ່ຽວຂ້ອງ ຂັ້ນແຂວງ
- ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ
- ແຂກທີ່ມີກຽດ ທ່ານຍິງ ແລະ ທ່ານຊາຍ ທີ່ເຂົ້າຮ່ວມພິທີຢູ່ຫ້ອງປະຊຸມ ແລະ ທາງອອນລາຍ

ກ່ອນອື່ນ, ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ທີ່ຈັດງານໃນມື້ນີ້ຂື້ນ ເພື່ອຊຸກຍູ້ ແລະ ສົ່ງເສີມການລົງທຶນດ້ານການທ່ອງທ່ຽວໃນເຂດປ່າໄມ້, ເພື່ອສ້າງໂອກາດໃນການມີວຽກເຮັດງານທຳ, ຮ່ວມມືກັບຊຸມຊົນທ້ອງຖິ່ນ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາປ່າໄມ້ ກໍ່ຄື ຊີວະນາໆພັນ ທີ່ມີຄວາມສຳຄັນໃນລະດັບປະເທດ ແລະ ໃນລະດັບໂລກ.

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະພາກພູມໃຈ ທີ່ທະນາຄານໂລກ ໄດ້ມີສ່ວນຮ່ວມໃນການລິເລີ່ມ ສ້າງສິ່ງອຳນວຍຄວາມສະດວກ ໃຫ້ນັກທຸລະກິດ ທີ່ຂຶ້ນຖະບຽນທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ສາມາດລົງທຶນໃສ່ການທ່ອງທ່ຽວ ໃນເຂດໂຄງການ ພູມິທັດປ່າໄມ້ ແລະ ພັດທະນາຊີວິດການເປັນຢູ່ຂອງລາວ ຫຼື Lao Landscape and Livelihood Project ຫຼື LLL.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮ່ວມກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ໂຄງການ LLL ເພື່ອແນ່ໃສ່ການຄຸ້ມຄອງປ່າໄມ້ ໂດຍສະເພາະ ປ່າສະຫງວນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນເຂດພື້ນທີ່ໂຄງການ ພາຍໃຕ້ການສະໜັບສະໜູນ ດ້ານການເງິນຮ່ວມກັນລະຫວ່າງ ທະນາຄານໂລກ, ກອງທຶນສິ່ງແວດລ້ອມໂລກ ແລະ ກອງທຶນດ້ານສະພາບອາກາດ Canada.

ບໍລິສັດທີ່ໄດ້ຮັບການຂຶ້ນທະບຽນເຮັດທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີເງື່ອນໄຂ ປະຕິບັດຕາມແຜນຄຸ້ມຄອງປ່າສະຫງວນ ແລະ ລະບຽບການ ທີ່ໂຄງການກຳນົດຂຶ້ນ ແມ່ນສາມາດເຂົ້າເຖິງແຫຼ່ງທຶນ ແລະ ສິ່ງອຳນວຍຄວາມສະດວກດ້ານວິຊາການຂອງໂຄງການ ເພື່ອນຳໃຊ້ເຂົ້າໃນການພັດທະນາ ການທ່ອງທ່ຽວໃນເຂດປ່າໄມ້ ຄຽງຄູ່ກັບ ການປົກປັກຮັກສາປ່າໄມ້ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນ ທີ່ຕິດພັນກັບປ່າໄມ້.

ສິ່ງອຳນວຍຄວາມສະດວກຂອງໂຄງການ ລວມມີ: ຄຳປຶກສາກ່ຽວກັບ ການພັດທະນາຜະລິດຕະພັນທ່ອງທ່ຽວໃນເຂດປ່າໄມ້, ການຝຶກອົບຮົມກ່ຽວກັບຄວາມຕ້ອງການຂອງຕະຫຼາດທ່ອງທ່ຽວ ໃນເຂດປ່າໄມ້ ແລະ ທຶນສົມທົບ ສ້າງພື້ນຖານໂຄງລ່າງສາທາລະນະ ຂະຫນາດນ້ອຍ, ການເຂົ້າເຖິງຕະຫຼາດ ແລະ ຂໍ້ມູນ ສຳຄັນຕໍ່ການທ່ອງທ່ຽວໃນເຂດປ່າໄມ້. ທຶນສົມທົບ ສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນການທ່ອງທ່ຽວໃນເຂດປ່າໄມ້ ຂອງໂຄງການປະກອບ ມີ 3 ປະເພດ. ຂ້າພະເຈົ້າ ເຂົ້າໃຈວ່າ ທາງໂຄງການຈະນຳສະເໜີລາຍລະອຽດ ໃນວາລະຕໍ່ໄປໃນມື້ນີ້.

ບັນດາທ່ານອາດຮູ້ດີແລ້ວວ່າ ເຂດໂຄງການ LLL ມີ ລະບົບນິເວດປ່າໄມ້, ຊີວະນາໆພັນ ແລະ ຊັບສິນ ທາງທຳມະຊາດ ເຊັ່ນ: ປ່າໄມ້, ຖ້ຳ, ແມ່ນ້ຳ, ແລະ ນ້ຳຕົກຕາດ ທີ່ມີຄວາມໂດດເດັ່ນ ແລະ ໜ້າທ່ຽວຊົມ. ນອກຈາກນີ້ ປະຊາຊົນບັນດາເຜົ່າ ທີ່ອາໃສຢູ່ພາຍໃນ ແລະ ໃກ້ກັບເຂດປ່າໄມ້ ຍັງມີ ວັດທະນະທຳ ທີ່ຫຼາກຫຼາຍ ແລະ ມີເອກະລັດສະເພາະ ທີ່ໜ້າຮຽນຮູ້. ສິ່ງເຫລົ່ານີ້ ສາມາດເປັນ ທ່າແຮງ ດຶງດູດ ນັກທ່ອງທ່ຽວທົ່ວໂລກ ໃຫ້ມາທ່ຽວຊົມ ແຫຼ່ງທ່ອງທ່ຽວ ແລະ ຍອມຮັບ ສປປ ລາວ ນັບມື້ນັບຫຼາຍຂຶ້ນ.

ການທ່ອງທ່ຽວ ໃນເຂດປ່າໄມ້ ສາມາດສ້າງລາຍໄດ້, ນຳເອົາເງິນຕາເຂົ້າມາໃນປະເທດ, ດຶງດູດການລົງທຶນ, ສ້າງໂອກາດດ້ານອາຊີບ ແລະ ກະຈາຍລາຍໄດ້ ສູ່ສັງຄົມ ໃນລະດັບປະເທດ ແລະ ພາກພື້ນ ໃນລະດັບໄວ. ທະນາຄານໂລກ ໄດ້ຄາດຄະເນວ່າ ການທ່ອງທ່ຽວທາງທຳມະຊາດ ສາມາດກວມເອົາ ປະມານ 10% ຂອງ GDP ແລະ 10% ຂອງວຽກເຮັດງານທຳໃນ ສປປ ລາວ. ໃນນີ້, ການສ້າງໂອກາດ ໃຫ້ແມ່ຍິງລາວ ຈຳນວນ 75,000 ຄົນ ໃຫ້ມີວຽກເຮັດງານທຳ ແມ່ນເປົ້າໝາຍໜຶ່ງ ຂອງໂຄງການ LLL.

ສະນັ້ນການທ່ອງທ່ຽວໃນເຂດປ່າໄມ້ ຈຳເປັນຕ້ອງໄດ້ຮັບການຄຸ້ມຄອງ ຢ່າງມີຄວາມຮັບຜິດຊອບຮ່ວມກັນ ເພື່ອຫຼີກລ້ຽງຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ການລົບກວນທາງສັງຄົມ. ດ້ວຍເຫດນີ້ ທາງທະນາຄານໂລກ ຈຶ່ງໄດ້ ສະໜອງ ການສະໜັບສະໜູນ ທີ່ຜ່ານການຄົ້ນຄ້ວາຢ່າງລະມັດລະວັງ ສຳລັບຮູບແບບການທ່ອງທ່ຽວທີ່ສາມາດນຳເອົາປະໂຫຍດອັນສູງສຸດ ໃຫ້ແກ່ປະເທດຊາດ ແລະ ປະຊາຊົນລາວ. ເຊິ່ງໃນນັ້ນທາງ ທະນາຄານໂລກ ໄດ້ໃຫ້ການ ສະໜັບສະໜູນ ການລົງທຶນໃສ່ໃນ ການທ່ອງທ່ຽວໃນເຂດປ່າໄມ້ ແບບມີຄວາມຮັບຜິດຊອບ ລວມທັງ ການປົກປ້ອງທາງສັງຄົມ ແລະ ສິ່ງແວດລ້ອມ.

**ທ່ານປະທານ, ຜູ້ຕາງໜ້າຈາກພາກລັດ, ຄູ່ຮ່ວມພັດທະນາ, ນັກທຸລະກິດ, ທ່ານຍິງ ແລະ ທ່ານຊາຍ**
ຄວາມອຸດົມສົມບູນ ຂອງປ່າໄມ້, ແຮງຈູງໃຈທີ່ຖືກຕ້ອງ, ຄວາມສາມາດໃນການຄຸ້ມຄອງການລົງທຶນ, ການປົກປ້ອງທາງສັງຄົມ ແລະ ສິ່ງແວດລ້ອມ ແມ່ນປັດໃຈ ແລະ ໂອກາດ ອັນສຳຄັນຕໍ່ການລົງທຶນດ້ານການທ່ອງທ່ຽວ ໃນເຂດປ່າໄມ້ ໃນ ສປປ ລາວ ໃຫ້ປະສົບຜົນສຳເລັດ. ການຮ່ວມມື ລະຫວ່າງ ອຸທິຍານແຫ່ງຊາດ, ພາກທຸລະກິດ ແລະ ຊຸມຊົນ ໃນການພັດທະນາການທ່ອງທ່ຽວ ໃນເຂດປ່າໄມ້ ສາມາດປະກອບສ່ວນເຂົ້າໃນການ ຄຸ້ມຄອງປ່າໄມ້ ໃຫ້ຍືນຍົງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນ ຕາມແນວທາງ ການເຕີບໂຕເສດຖະກິດສີຂຽວ ແລະ ການສ້າງອາຊີບໃຫ້ຊຸມຊົນ.

ຂ້າພະເຈົ້າຮູ້ສຶກດີໃຈ ທີ່ ຜູ້ຈັດຕັ້ງປະຈີບັດ ໂຄງການ ພາຍໃຕ້ການຊີ້ນຳຂອງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເຫັນ ຄວາມສຳຄັນ ຂອງການມີສ່ວນຮ່ວມ ໃນການຕັ້ງປະຕິບັດ ກິດຈະກຳໂຄງການ ເຊິ່ງເຫັນໄດ້ໃນການເຂົ້າຮ່ວມ ຂອງທ່ານຮອງປະທານ ສະມາຄົມການທ່ອງທ່ຽວລາວ ຢູ່ງານໃນມື້ນີ້ ເພື່ອ ແລກປ່ຽນປະສົບການ ການຈັດຕັ້ງປະຕິບັດ ທີ່ດີ ສຳລັບການລົງທຶນທ່ອງທ່ຽວ ໃນເຂດປ່າໄມ້.

ທະນາຄານໂລກ ເຫັນໄດ້ວ່າ ການທ່ອງທ່ຽວທາງທຳມະຊາດ ແລະ ໃນເຂດປ່າໄມ້ ເປັນກາລະໂອກາດທີ່ສຳຄັນ ສຳລັບ ສປປ ລາວ. ຖ້າພວກເຮົາເຮັດວຽກຮ່ວມກັນຢ່າງໃກ້ສິດ ແລະ ສຸມໃສ່ເປົ້າໝາຍອັນດຽວກັນ ມັນຈະກາຍເປັນພະລັງ ທີ່ສຳຄັນ ໃນການຊ່ວຍໃຫ້ປະຊາຊົນຢູ່ໃນເຂດໂຄງການ ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ສ້າງຄວາມຮັກ ແລະ ປູກຈິດສຳນຶກຂອງຊຸມຊົນ ໃນການ ປະກອບສ່ວນເຂົ້າໃນການປົກປັກຮັກສາປ່າໄມ້, ອານຸລັກພູມີທັດປ່າໄມ້ ແລະ ຮີດຄອງປະເພນີອັນດີງາມ ຂອງບັນດາເຜົ່າ ໃຫ້ຄົນຫຸ່ນຫຼັງ ໄດ້ສືບທອດຕໍ່ໄປ.
**ຂໍຂອບໃຈ.**